ແບບຮຽນເພື່ອການພັດທະນາ
ຄວາມຊຳນານໃນການຜະລິດເຂົ້າ

Rice Production
Skills Development Series



# ການເກັບຕົວຢ່າງ ຊັ້ນເທິງຂອງດິນປຽກ

# Wet Topsoil Sampling

Laos Extension for Agriculture Project
149 - 190

ກົມປູກຝັງ ແລະສົ່ງເສີມການກະເສດ
ໂຄງການ ລາວ-ອີຣີ
DEPARTMENT OF AGRICULTURE AND EXTENSION
LAO-IRRI PROJECT

RECEIVED
01 DEC 2002
631.4

# ການເກັບຕົວຢ່າງ
# ຊັ້ນເທິງຂອງດິນປຽກ

# Wet Topsoil
# Sampling

ກົມປູກຝັງ ແລະສົ່ງເສີມການກະເສດ
ໂຄງການ ລາວ-ອີຣີ
DEPARTMENT OF AGRICULTURE
AND EXTENSION
LAO-IRRI PROJECT
1992

## ລະບຽບການ

ບົດຮຽນນີ້ໃຫ້ຄວາມຮູ້ກ່ຽວກັບ ການເກັບຕົວຢ່າງຊັ້ນເທິງຂອງດິນປຽກເວລາໃດ ແລະເອົາແບບໃດຈຶ່ງຈະຖືກຕ້ອງ.

## ເຫດຜົນ

ບາດກ້າວທຳອິດ ແລະມີຄວາມສຳຄັນທີ່ສຸດໃນການກວດສອບດິນປະເພດໃດນຶ່ງແມ່ນການເກັບຕົວຢ່າງດິນ. ການກວດສອບດິນຈະມີຄວາມໝາຍເຕັມສ່ວນກໍຕໍ່ເມື່ອການເອົາຕົວຢ່າງດິນທີ່ຖືກຕ້ອງ.

## ຈຸດປະສົງ

ເມື່ອຮອດຕອນທ້າຍຂອງບົດນີ້ແລ້ວທ່ານຈະສາມາດປະຕິບັດໄດ້ 7 ບາດກ້າວໃນການເກັບຕົວຢ່າງຊັ້ນເທິງຂອງດິນປຽກ.

## ອຸປະກອນຕ່າງໆ

- ແຜ່ນປ້າຍໝາຍ.
- ຢາງບົ່ວງ
- ຢາງບົ່ວງ
- ທີ່ເກັບຕົວຢ່າງຫລືເຄື່ອງມືທີ່ງ່າຍດາຍທີ່ເຮັດດ້ວຍໄມ້ໄຜ່.
- ຖົງຢາງ (ຂະໜາດ 22.5 x 30 ຊຕມ.)
- ສີດຳ.
- ປື້ມບັນທຶກ
- ຄຸ
- ບິກເຟີດ


ຖົງຢາງ
ຄຸ
ທໍ່ເກັບຕົວຢາງ
ບິກເຟີດ
ປື້ມບັນທຶກ
ແຜ່ນປ້າຍຫມາຍ
ຢາງບ້ວງ
ສໍດຳ

# ຂັ້ນຕອນຕ່າງໆ

**ເວລາໃດຄວນເກັບຕົວຢ່າງ.**

ການວິໃຈດິນຈາກພື້ນທີ່ໄຮ່ນາຂອງຊາວກະສິກອນ ຄວນຈະເຮັດໃນແຕ່ລະ 3-5 ປີ.

ເພື່ອກຳໜົດຂໍ້ແນະນຳກ່ຽວກັບການໃສ່ປູນ, ຝຸ່ນວິທະຍາສາດ ໃຫ້ແກ່ພືດທີ່ຈະປູກ, ຄວນເກັບເອົາຕົວຢ່າງດິນເພື່ອທຳການວິໃຈຢ່າງໜ້ອຍ 6-8 ອາທິດກ່ອນຈະທຳການປູກ.

## 1. ຈົ່ງຈັດແບ່ງພື້ນທີ່ຈະເກັບຕົວຢ່າງອອກເປັນສ່ວນໆ

ຈົ່ງຈັດແບ່ງພື້ນທີ່ອອກເປັນສ່ວນໆ ໂດຍອີງໃສ່ປັດໃຈທາງວັດຖຸວິທະຍາ, ນິເວດວິທະຍາ, ແລະທາງກາຍຍະພາບ (ຄວາມຄ້ອຍ, ການລະບາຍນ້ຳ, ເນື້ອດິນ, ຄວາມເລິກ, ຝຸ່ນ ແລະປະຫວັດການປູກພືດຜ່ານມາ).

ຈົ່ງຈັດແຕ່ລະສ່ວນໃຫ້ສະເໝີກັນເທົ່າທີ່ຈະເຮັດໄດ້ໂດຍອີງໃສ່ຄວາມຄ້ອຍ, ການລະບາຍນ້ຳ, ເນື້ອດິນ, ຄວາມເລິກ, ຝຸ່ນ ແລະປະຫວັດການປູກພືດຜ່ານມາ.

ໃນຕົວຢ່າງຕໍ່ໄປນີ້ ພວກເຮົາຄວນຈັດແບ່ງພື້ນທີ່ອອກເປັນ 3 ສ່ວນ ເນື່ອງຈາກວ່າພື້ນທີ່ມີຄວາມແຕກຕ່າງກັນດ້ານຄວາມຄ້ອຍ, ແລະລະບົບນ້ຳ.

ເຖິງແມ່ນວ່າມີຫລາຍສິ່ງທີ່ຄ້າຍຄຽງກັນ ແລະສ່ວນນຶ່ງໆ ສະໝ່ຳສະເໝີກັນແລ້ວກໍຕາມ ແຕ່ມັນຈະເປັນຕົວແທນໃຫ້ໄດ້ແລະບໍ່ເກີນ 4 ເຮັກຕາ. ຖ້າວ່າພື້ນທີ່ມີ 6 ເຮັກຕາ ດັ່ງໃນສ່ວນທີ່ 2 ກໍຄວນແບ່ງອອກເປັນສອງສ່ວນຍ່ອຍອີກ.






2. ກຳຫນົດຈຸດທີ່ຈະເອົາຕົວຢ່າງດິນ. (ບໍ່ໃຫ້ຫນ້ອຍກວ່າ 10 ຈຸດຕໍ່ນຶ່ງສ່ວນ) ຊຶ່ງຄວນໃຫ້ໄລຍະຫ່າງລະຫວ່າງຈຸດຕໍ່ຈຸດເທົ່າກັນແລະໃຫ້ຈຸດຕົວຢ່າງເຫລົ່ານັ້ນກະຈາຍທົ່ວໄປທັງພື້ນທີ່ຂອງສ່ວນຍ່ອຍ.



3. ເກັບເອົາຕົວຢ່າງດິນຈາກແຕ່ລະຈຸດ.

ກ. ທຳຄວາມສະອາດໜ້າດິນ ເຊັ່ນຂີ້ເຫຍື້ອ, ຫລື
ເສດພືດຕ່າງໆ ແລະເກັບກ້ອນຫີນທີ່ມີເສັ້ນຜ່າ
ສູນກາງໃຫຍ່ກ່ວາ 5 ຊຕມ. ນັ້ນອອກ.



ຂ. ເນັ້ນທີ່ເກັບຕົວຢ່າງລົງດິນ (ຫລືກະບອກໄມ້ໄຜ່) ໃນລວງຕັ້ງໃຫ້ເລິກປະມານ 15 ຊຕມ. ຫລືລົງໄປຮອດເຂດພື້ນຂີ້ໄຖ. ອ່ຽງທີ່ໄປມາແລ້ວຖອດຂຶ້ນເພື່ອເກັບຕົວຢ່າງດິນ.



໑. ຖອກດິນອອກໃສ່ຖຸ ຕົວຢ່າງທັງຫມົດຕ້ອງໃຫ້ບໍລິມາດເທົ່າກັນ.



8.

4. ໃຊ້ມືຂອງທ່ານປະສົມຕົວຢ່າງດິນ ທີ່ເອົາມາ ຈາກ 10 ຈຸດ.



5. ແຍກເອົາດິນໃສ່ຖົງຢາງປະມານ 1/2 ກິໂລກຼາມ

ນີ້ເປັນຕົວຢ່າງທີ່ສົມບູນຂອງທ່ານ, ຊຶ່ງມີປະມານ 25 % ຂອງປະລິມານທັງຫມົດ .



6. ບັນຈຸຖົງຕົວຢ່າງດິນທີ່ປະສົມແລ້ວນັ້ນ ໃສ່ຖົງຢາງອື່ນອີກແລະຕິດປ້າຍໝາຍໃສ່ເອິ່ງກາງຂອງຖົງ.

ຂໍ້ມູນທີ່ຈຳເປັນໃນປ້າຍໝາຍໄດ້ສະແດງໃຫ້ເຫັນຕາມແບບລຸ່ມນີ້.



7. ສົ່ງຕົວຢ່າງທີ່ສົມບູນໄປວິໃຈພ້ອມກັບຂໍ້ມູນທີ່ຈຳເປັນດັ່ງໃນເຈັ້ຍບັນທຶກລຸ່ມນີ້.

ຖ້າຫາກທ່ານມີຫລາຍຕົວຢ່າງໂດຍບໍ່ສາມາດນຳໄປຫ້ອງທົດລອງໄດ້ ໃນເວລານັ້ນ. ຈົ່ງຕາກຕົວຢ່າງດິນໄວ້ບ່ອນທີ່ຮົ່ມ.



## ການປະເມີນຜົນ

ໃຫ້ອຸປະກອນທຸກຢ່າງແລະເນື້ອທີ່ດິນປຮກ 1 ເຮັກຕາ. ຈິ່ງສະແດງວິທີການ ເກັບຕົວຢ່າງດິນ ແລະການຈັດເອົາຕົວຢ່າງທີ່ຖືກຕ້ອງ.

ພິມທີ່ ໂຮງພິມວຽງຈັນ